## ແບບວິທີກ້າວໄປເຖິງຈຸດໝາຍຢຸດຕິການຖາງປ່າເຮັດໄຮ່

### =ຈາກທັດສະນະຂອງການສົ່ງເສີມໃຫ້ຊາວບ້ານມີລາຍໄດ້ເພີ່ມຂຶ້ນ=

ໂຄງການ ຟໍຄອມ (FORCOM) ໄດ້ເລືອກເອົາ 2 ແບບວິທີການເພື່ອບັນລຸຈຸດໝາຍ ຊຶ່ງຈະອະທິບາຍລາຍລະອຽດດັ່ງລຸ່ມນີ້:

ຈຸດປະສົງຂອງໂຄງການ ຟໍຄອມແມ່ນ ເພື່ອສົ່ງເສີມການນຳໃຊ້ທີ່ດິນແລະປ່າໄມ້ແບບໝັ້ນຄົງຍືນນານຢູ່ໃນພື້ນທີ່ເປົ້າໝາຍຂອງໂຄງການ ແລະ ບໍລິເວນອ້ອມແອ້ມ ໂດຍແມ່ນຊາວບ້ານເປັນເຈົ້າການລິເລີ່ມເອງ.ຄິດວ່າຜູ້ທີ່ຟັງເປັນເທື່ອທຳອິດອາດຈະເຂົ້າໃຈຍາກແດ່.ແຕ່ຈະຂໍອະທິບາຍໃຫ້ເຂົ້າໃຈງ່າຍຂື້ນດັ່ງນີ້:

ຢູ່ ສປປ ລາວ ການປູກຝັງຂອງປະຊາຊົນໃນເຂດພູດອຍ ສ່ວນໃຫ່ຍແມ່ນຍຶດອາຊີບຖາງປ່າເຮັດໄຮ່ເປັນຕົ້ນຕໍ, ຍ້ອນການເພີ່ມຂຶ້ນຂອງປະຊາກອນແລະນະໂຍບາຍຈັດສັນທີ່ຢູ່ອາໄສອັນຄົງທີ່ໃຫ້ປະຊາຊົນບັນດາເຜົ່າຈຶ່ງເຮັດໃຫ້ຮອບວຽນຂອງການຖາງປ່າເຮັດໄຮ່ນັ້ນ ນັບມື້ສັ້ນລົງ. ຫຼືເວົ້າອີກຢ່າງໜຶ່ງກໍ່ຄື: ຫຼັງຈາກເວລາສິ້ນສຸດການຖາງປ່າເຮັດໄຮ່ເທື່ອກ່ອນ ຈົນຮອດເວລາກັບຄືນມາຖາງປ່າເລົ່າຢູ່ບ່ອນເກົ່າ ເພື່ອເຮັດໄຮ່ອີກເທື່ອໃໝ່ ຊຶ່ງເອີ້ນວ່າ: ໄລຍະເວລາປ່ອຍໃຫ້ປ່າຟື້ນຟູນັ້ນ ໄດ້ສັ້ນເຂົ້າ ປະມານ 2-3 ປີ ເທົ່ານັ້ນ. ສະພາບຂອງປ່າທີ່ຍັງບໍ່ທັນຟື້ນຕົວໄດ້ ຊ້ຳພັດມາຖືກຖາງແລະຈູດເຜົາແບບຊ້ຳໄປຊ້ຳມາແນວນັ້ນ ກໍ່ເລີຍເຮັດໃຫ້ດິນເຊື່ອມຄຸນນະພາບ, ຕົ້ນໄມ້ບໍ່ສາມາດຈະເກີດຫຼືເຕີບໃຫ່ຍໄດ້ທັນເຮັດໃຫ້ຜືນໄຮ່ເກົ່າກາຍເປັນພູທີ່ມີຫຍ້າຂຶ້ນເຕັມໄປໝົດ.



ການຈູດເພື່ອຖາງປ່າເຮັດໄຮ່

ມາຮອດດຽວນີ້ໜ່ອຍພູທີ່ມີສະພາບແນວນີ້ແມ່ນມີຈຳນວນເພີ້ມຂຶ້ນຫຼາຍ. ສຳລັບປະຊາຊົນທີ່ອາໃສຢູ່ເຂດພູດອຍແລ້ວ ປ່າໄມ້ມີຄວາມສຳຄັນຕໍ່ຊີວິດການເປັນຢູ່ປະຈຳວັນຂອງເຂົາເຈົ້າຫຼາຍເພາະມັນແມ່ນບ່ອນໃຫ້ອາຫານ ແລະ ສະໜອງວັດສະດຸໃນການສ້າງທີ່ຢູ່ອາໄສ. ການຖາງປ່າເຮັດໄຮ່ແມ່ນ ການຕັດໄມ້ແລ້ວຈູດເພື່ອສ້າງເນື້ອທີ່ສຳລັບການປູກພືດສະບຽງອາຫານເປັນຕົ້ນ ແມ່ນເຂົ້າ, ສາລີ, ເຜືອກມັນ ແລະ ອື່ນໆ. ເຂົ້າໄຮ່ທີ່ຜະລິດໄດ້ນັ້ນ ສ່ວນຫຼາຍແມ່ນເອົາໄປຂາຍ ເພື່ອສ້າງລາຍໄດ້ເຂົ້າຄອບຄົວ. ດ້ວຍເຫດນີ້ກ່ອນອື່ນໝົດ ທາງໂຄງການຟໍຄອມຈຶ່ງຕ້ອງໄດ້ຖືເອົາຈຸດຢືນຂອງຊາວບ້ານເປັນທີ່ຕັ້ງ ໂດຍອີງໃສ່ແນວຄວາມຄິດພື້ນຖານໃນການຊອກຫາວິທີທາງ ຫຼື ກິດຈະກຳທີ່ຈະມາທົດແທນ(ການເຮັດໄຮ່ປູກເຂົ້າ) ເພື່ອເພີ້ມລາຍໄດ້ໃຫ້ພວກເຂົາເຈົ້າ. ແນ່ໃສ່ຫຼຸດຜ່ອນການຖາງປ່າເຮັດໄຮ່. ຖ້າລຳພັງແຕ່ໃຫ້ມີການຟື້ນຟູແລະປົກປັກຮັກສາປ່າໄມ້ແລ້ວ ຊາວບ້ານເກືອບໝົດທຸກຄົນແມ່ນຈະບໍ່ໃຫ້ຄວາມສົນໃຈເລີຍ. ຍົກຕົວຢ່າງການສົ່ງເສີມການປູກປ່າ ຕັ້ງ ແຕ່ເລີ້ມປູກ ຈົນມາເຖິງເວລາເກັບກ່ຽວ ເຖິງວ່າຈະໃຊ້ຊະນິດໄມ້ ໃຫຍ່ໄວປານໃດກໍ່ຕາມ ກໍ່ຕ້ອງໃຊ້ເວລາຢ່າງຕ່ຳ 10 ປີ ຊາວ ບ້ານທີ່ທຸກຍາກບໍ່ສາມາດລໍຖ້າເວລາອັນດົນນານຈັ່ງຊັ້ນໄດ້. ຖ້າເປັນເຊັ່ນນັ້ນ ບໍ່ວ່າຈະຊັກຊວນເຂົາເຈົ້າແນວໃດກໍ່ຕາມກໍ່ບໍ່ມີໃຜຢາກເຮັດນຳ. ເພາະສະນັ້ນທາງໂຄງການຈຶ່ງໄດ້ເລືອກເອົາ 2 ແບບ ວິທີ່ຄື:

① ແບບວິທີອັນທີ 1: ແມ່ນສົ່ງເສີມໃຫ້ຊາວບ້ານມີກິດຈະກຳ ໃນການຟື້ນຟູ ແລະ ປົກປັກຮັກສາປ່າໄມ້ໂດຍກົງ.

② ແບບວິທີອັນທີ 2: ແມ່ນສົ່ງເສີມໃຫ້ຊາວບ້ານມີກິດຈະກຳ ໃນການຮັກສາປ່າໄມ້ໂດຍທາງອ້ອມ.

ຍົກຕົວຢາງ: ຈຸດໝາຍອັນທີ 1: ແມ່ນກິດຈະກຳກ່ຽວກັບການນຳໃຊ້ທີ່ດິນ ແລະ ປ່າໄມ້ແບບໝັ້ນຄົງຍາວນານ ໂດຍການສ້າງຫຼັກການໃນການປູກແລະການຮັກສາປ່າໄມ້.

ຈຸດໝາຍອັນທີ່ 2: ແມ່ນສະໜັບສະໜູນກິດຈະກຳ ເຊັ່ນ: ການສັບຊ່າວນາຕົ່ມ, ການລ້ຽງສັດ, ການລ້ຽງປາ, ການປູກຕົ້ນໄມ້ໃຫ້ມາກ ຊຶ່ງລ້ວນແຕ່ແມ່ນກິດຈະກຳ ທີ່ມີຜົນໃນໄລຍະສັ້ນ (ຄືໄດ້ຮັບລາຍໄດ້ໄວ). ຖ້າຊາວບ້ານໄດ້ຮັບລາຍໄດ້ຊຳໃດຊຳໜຶ່ງແລ້ວ ກໍ່ຫວັງວ່າເຂົາເຈົ້າຈະສາມາດຜ່ອນການຖາງປ່າເຮັດໄຮ່ ແລະ ປ່າໄມ້ກໍ່ຈະໄດ້ຮັບຜົນກະທົບໜ້ອຍລົງ. ແນ່ນອນ ວ່າການສົ່ງເສີມກິດຈະກຳແບບປະສົມປະສານກັນ ລະຫວ່າງ ແບບວິທີອັນທີ່ 1 ແລະ 2 ໃຫ້ດຳເນີນໄປໄດ້ດ້ວຍດີນັ້ນແມ່ນຈະຕ້ອງໄດ້ໃຊ້ເວລາສົມຄວນໂດຍທີຊາວບ້ານຕ້ອງເປັນເຈົ້າການໃນການຄົ້ນຄິດພິຈາລະນາຊ່ວຍກັນ ພ້ອມທັງຕ້ອງໄດ້ ຄຳນຶງເຖິງສະພາບເສດຖະກິດ ສັງຄົມ ແລະ ທຳມະຊາດຂອງເຂົາເຈົ້ານຳອີກ.

### ແບບວິທີການກ້າວໄປສູ່ຈຸດໝາຍແລະຮູບຈຳລອງແນວຄວາມຄິດທົ່ວໄປຂອງການບັນລຸຈຸດໝາຍ

**ແບບວິທີ ທີ່ 1** (ເນື້ອໃນແລະການສົ່ງເສີມ)

ສົ່ງເສີມກິດຈະກຳປູກແລະຮັກສາປ່າໄມ້
- ກິດຈະກຳໂດຍກົງ
- ທັດສະນະອັນຍາວໄກ
- ກິດຈະກຳລວມຂອງບ້ານ

- ຊັບສ່າວນາຮ່ວມກັນຂອງໝູ່ບ້ານ
- ຮັກສາປ່າແຫຼ່ງນ້ຳ
- ສ້າງສວນປູກໄມ້ລວມຂອງບ້ານ
- ສ້າງສວນປູກໄມ້ໃຫ້ໝາກຂອງໂຮງຮຽນ

**ແບບວິທີ ທີ່ 2** (ເນື້ອໃນແລະການສົ່ງເສີມ)

ສົ່ງເສີມກິດຈະກຳການຜະລິດທີ່ຈະນຳມາທົດແທນ
- ກິດຈະກຳໂດຍທາງອ້ອມ
- ທັດສະນະອັນໃກ້
- ກິດຈະກຳພາຍໃນຄອບຄົວ

- ການລ້ຽງສັດ(ໝູ, ແບ້, ງົວ, ໄກ່ ເປັນຕົ້ນ)
- ຊັບສ່າວນາຕົ່ມ
- ການລ້ຽງປາ
- ການປູກຕົ້ນໄມ້ໃຫ້ໝາກເປັນຕົ້ນ

↓

- ●ປົກປັກຮັກສາປ່າໄມ້
- ●ລາຍໄດ້ເພີ່ມຂຶ້ນ
- ●ເພີ່ມກິດຈະກຳການຜະລິດທີ່ຈະມາທົດແທນ

↓

ຫຼຸດຜ່ອນການເພິ່ງພາການຖາງປ່າເຮັດໄຮ່

↓

ຢຸດຕິການຖາງປ່າເຮັດໄຮ່

↓

**ນຳໃຊ້ທີ່ດິນແລະປ່າໄມ້ແບບຍືນຍົງ**





## ຊາວບ້ານ (ບ້ານ ສາມຕົ້ນ) ທີ່ເຂົ້າຮ່ວມກິດຈະກຳການລ້ຽງແບ້

ກິດຈະກຳຢູ່ບ້ານຈຸດເລີ່ມຕົ້ນໄດ້ເລີ່ມຕົ້ນຢ່າງຈິງຈັງແລ້ວ. ເທື່ອນີ້ແມ່ນຈະໄດ້ນຳສະເໜີຊາວບ້ານທີ່ເຂົ້າຮ່ວມກິດຈະກຳຢູ່ບ້ານຈຸດເລີ່ມຕົ້ນ. ຄັ້ງທຳອິດນີ້ ແມ່ນ ທ້າວ ສີຈັນ ນາຍບ້ານ ບ້ານ ສາມຕົ້ນ ແລະ ຫົວໜ້າກຸ່ມກິດຈະກຳລ້ຽງແບ້ ຄື ທ້າວ ສິມແພງ.

ບ້ານ ສາມຕົ້ນແມ່ນໜຶ່ງໃນໝູ່ບ້ານຂອງເມືອງວຽງຄຳ ແຂວງຫຼວງພະບາງ, ຫ່າງຈາກຕົວເມືອງຫຼວງພະບາງໄປທາງຕາເວັນອອກສ່ຽງເໜືອປະມານ 200 ກິໂລແມັດ ເຊິ່ງຕິດກັບແຂວງຫົວພັນ. ລວມມີ 77 ຫຼັງຄາເຮືອນ, ມີປະຊາກອນ 471 ຄົນ ເປັນບ້ານລາວເທິງ, ສູງຈາກໜ້ານ້ຳທະເລ 800 ແມັດ. ແນ່ນອນວ່າບໍ່ມີໄຟຟ້າແລະນ້ຳປະປາໃຊ້ເທື່ອ, ລາຍໄດ້ຫຼັກຈາກຜົນຜະລິດແມ່ນ: ມັນດ້າງ, ມັນຕົ້ນ, ໝາກງາ, ການລ້ຽງສັດ ແລະ ເຄື່ອງປ່າຂອງດົງ.

### ນາຍບ້ານ ບ້ານ ສາມຕົ້ນ (ທ້າວ ສີຈັນ)



ນັບແຕ່ມີໂຄງການນີ້ເຂົ້າມາ ຂ້າພະເຈົ້າຮູ້ສຶກວ່າ:ໝູ່ບ້ານໄດ້ປ່ຽນແປງໄປຫຼາຍ. ອັນທີ 1 ແມ່ນມີການກໍ່ສ້າງອ່າງເກັບນ້ຳຢູ່ 2 ບ່ອນ, ເຮັດໃຫ້ບັນຫານ້ຳດື່ມ, ນ້ຳໃຊ້ໄດ້ຖືກປັງປຸງ ໃຫ້ດີຂຶ້ນ. ອັນທີ 2 ແມ່ນ: ການຝຶກອົບຮົມກ່ຽວກັບການລ້ຽງໝູແລະແບ້. ຊາວບ້ານກໍ່ໄດ້ເຫັນເຖິງຄວາມສຳຄັນແລະເອົາໃຈໃສ່ຕື່ມ ໃນການຄຸ້ມຄອງອາຫານສັດແລະການສັກຢາປ້ອງກັນພະຍາດ.ຂ້າພະເຈົ້າເອງ ແມ່ນມີໜ້າທີ່ຮັບຜິດຊອບເປັນສັດຕະວະແພດປະຈຳໝູ່ບ້ານ.ກ່ອນເລີ່ມຕົ້ນໂຄງການເຖິງຈະພະຍາຍາມອະທິບາຍເຖິງຄວາມສຳຄັນ ຂອງການສັກຢາປ້ອງກັນພະຍາດກໍ່ບໍ່ມີໃຜຢາກເຊື່ອ ແລະ ປະຕິບັດຕາມ.ຈົນວ່າໂຄງການນີ້ເຂົ້າມາເລີ່ມຕົ້ນເຮັດກິດຈະກຳຢູ່ບ້ານີ້ ຮູ້ສຶກວ່າຊາວບ້ານໄດ້ມີຄວາມເອົາໃຈໃສ່ ຕໍ່ການລ້ຽງສັດຫຼາຍຂຶ້ນຕື່ມ.

ຂ້າພະເຈົ້າຄິດວ່າ ໃນອານາຄົດອັນໃກ້ນີ້ ການເພິ່ງພາການຖາງປ່າເຮັດໄຮ່ ຄືຊິຄ່ອຍໆຈາງຫາຍໄປ, ເພາະປະຈຸບັນກໍ່ມີຊາວບ້ານ 2-3 ຄອບຄົວແລ້ວທີ່ບໍ່ມີຄວາມຈຳເປັນທີ່ຈະຕ້ອງໄປຖາງປ່າເຮັດໄຮ່ອີກຕໍ່ໄປ.

ຂ້າພະເຈົ້າໃນນາມນາຍບ້ານ, ປະທານຄະນະກຳມະການຈັດຕັ້ງປະຕິບັດຈຸດເລີ້ມຕົ້ນ (ຄປຕ) ແລະສັດຕະວະແພດປະຈຳບ້ານ ເຖິງວ່າວຽກງານຈະຫຼາຍກໍ່ຕາມ ແຕ່ເພື່ອເປັນການພັດທະນາບ້ານຂອງຕົນແລ້ວ ຂ້າພະເຈົ້າບໍ່ໄດ້ຄິດວ່າມັນເປັນເລື່ອງທີ່ຍາກລຳບາກເລີຍ.

### ຫົວໜ້າກຸ່ມລ້ຽງແບ້ (ທ້າວ ສິມແພງ)



ທ່ານ ສິມແພງ ໃດ້ເຂົ້າຮ່ວມກິດຈະກຳສົ່ງເສີມຊາວບ້ານ ໃນຖານະເປັນຫົວໜ້າກຸ່ມລ້ຽງແບ້, ອີກທັງລາວຍັງເປັນສະມາຊິກຄປຕອີກ. ລາວມີອາຍຸ 50 ປີ, ມີລູກທັງໝົດ 8 ຄົນ ຜູ້ຫຼ້າອາຍຸ 4 ປີ ແລະ ຜູ້ກົກ ອາຍຸ 24 ປີ ລູກສາວກົກຂອງລາວກໍ່ແມ່ນ ໜຶ່ງໃນສະມາຊິກ ຄປຕ ທີ່ຊ່ວຍເຫຼືອໂຄງການນຳອີກ. ກ່ອນທີ່ຈະມາເຮັດກິດຈະກຳສົ່ງເສີມຊາວບ້ານ ສິມແພງ ກໍ່ເຄີຍໄດ້ລ້ຽງສັດມາກ່ອນ ເພາະວ່າລາວມີຈິດໃຈຢາກສົ່ງເສີມການລ້ຽງສັດ ແລະ ເປັນແບບຢ່າງທີ່ດີໃຫ້ແກ່ບ້ານອື່ນ. ລາວຈຶ່ງໄດ້ເຂົ້າມາຮ່ວມກິດຈະກຳ ໃນຖານະເປັນຫົວໜ້າກຸ່ມລ້ຽງແບ້.

ຄວາມຮູ້ສຶກຂອງລາວທີ່ໄດ້ເຂົ້າມາຮ່ວມກິດຈະກຳສົ່ງເສີມຊາວບ້ານຂອງໂຄງການ:
" ຫຼັງຈາກທີ່ໄດ້ເຂົ້າຮ່ວມກິດຈະກຳແລ້ວ ມີຫຼາຍສິ່ງຫຼາຍຢ່າງທີ່ປ່ຽນແປງໄປ, ຂ້າພະເຈົ້າໄດ້ເຂົ້າຮ່ວມຝຶກອົບຮົມໃນການເຮັດຄອກສັດ, ໄດ້ຮຽນຮູ້ການຄຸ້ມຄອງອາຫານສັດ, ວິທີການລ້ຽງແບ້ກໍ່ມີການປ່ຽນແປງໄປຫຼາຍ ແລະຍັງໄດ້ປະຍຸກວິຊາການນີ້ເຂົ້າໃນການລ້ຽງໝູນຳອີກ ເຊິ່ງບໍ່ແມ່ນພຽງແຕ່ລ້ຽງສັດເທົ່ານັ້ນ ຕໍ່ໄປກໍ່ຢາກປູກຕົ້ນໄມ້ໃຫ້ໝາກ ແລະປູກຕົ້ນສັກນຳອີກ.

## ອາຫານທ່ຽງມື້ນີ້

ເທື່ອທີ 2 ນີ ກໍແມນບົດລາຍງານຈາກທ່ານ ອິວະຊະ ຫົວໜ້າທີ່ປຶກສາປະຈຳໂຄງການ

ເທື່ອນີ້ແມ່ນຈະໄດ້ນຳສະເໜີອາຫານ 3 ຢ່າງທີ່ເຈົ້າຂອງບ້ານ ເຮັດມາໃຫ້ກິນ. ຖ້າຄົນແຂ້ວບໍ່ດີ ກໍ່ຫຍ້ຳບໍ່ໄດ້.

ອັນທີ 1: ແມ່ນອາຫານທີ່ທຸກທ່ານຄືຊິຄຸ້ນເຄີຍກັນດີ ກໍ່ຄື: ຕຳໝາກຫຸ່ງ, ແຕ່ລະບ້ານລົດຊາດກໍ່ຈະແຕກຕ່າງກັນໄປ, ມີບາງເທື່ອກໍ່ຈະມີກິ່ນເໝັນແດ່ ຍ້ອນເຂົາເຈົ້າໃສ່ປາທີ່ໝັກໄວ້ດົນຫຼືປາແດກ, ຢູ່ບ້ານນອກບາງບ່ອນເຂົາເຈົ້າກໍ່ໃສ່ປູນາ. ຖ້າແມ່ນນັກທ່ອງທ່ຽວແມ່ນຂໍແນະນຳໃຫ້ກິນຢູ່ຕາມຮ້ານອາຫານຄືຊິດີກວ່າ.ອາຫານນີ້ມີຈຸດພິເສດຢູ່ບ່ອນວ່າ: ຂ້ອນຂ້າງຈະເຜັດ,ຂະໜາດວ່າຂ້ອຍທີ່ວ່າມັກກິນເຜັດ ບາງເທື່ອກໍ່ຍັງກິນບໍ່ໄດ້.


ຕຳໝາກຫຸ່ງ

ອັນທີ 2: ແມ່ນຂອງແກ້ມເຫຼົ້າ,ສີເຫຼືອງອ່ອນນັ້ນແມ່ນຕ່ອນນ້ຳມັນໝູທີ່ເຂົາເຈົ້າເອົາໄປຈືນເພື່ອເອົານ້ຳມັນອອກເອີ້ນວ່າ: ຄຽບໝູ. ແລະ ກໍ່ມີຊີ້ນສະຫວັນ (ຊີ້ນງົວ) ຕ້ອງຂໍໂທດນຳເຈົ້າຂອງບ້ານຫຼາຍໆເພາະມັນບໍ່ແຊບແລະກໍ່ຫຍາບອີກ.

ອັນທີ 3: ແມ່ນແກງ ທີ່ໃຊ້ໃບໄມ້ທີ່ຫວານນຳມາປະກອບອາຫານ ເຊິ່ງເອີ້ນວ່າ: ແກງຜັກຫວານ. ຖາມເຂົາເຈົ້າວ່າໄດ້ມາແຕ່ໃສ? ເຂົາເຈົ້າກໍ່ຕອບມາວ່າ: ໄປເກັບມາແຕ່ແຈຮົ້ວຂ້າງບ້ານ ແຖວນັ້ນ. ຊີມເບິ່ງກໍ່ຫວານແທ້, ຫວານແບບທຳມະຊາດ ຂໍແນະນຳເລີຍວ່າແຊບ. ອາຫານຊະນິດນີ້ບໍ່ມີໃນເມນູຕາມຮ້ານອາຫານ,ມີແຕ່ຄົນທີ່ຢູ່ບ່ອນນັ້ນເທົ່ານັ້ນຈຶ່ງຈະໄດ້ກິນ.


ຄຽບໝູ


ແກງຜັກຫວານ

## ແນະນຳພະນັກງານໃໝ່



ເດືອນ 3 ປີ 2005 ນີ້ ໄດ້ມີຜູ້ປະສານງານ (ພະນັກງານປະຈຳໂຄງການ) ເຂົ້າມາເພີ່ມອີກ 1 ຄົນ. ຊື່ຂອງລາວແມ່ນ ທ້າວ ພູສິດ ພູມາວົງ (39 ປີ) ຍ້າຍມາຈາກກອງສົ່ງເສີມກະສິກຳແລະປ່າໄມ້. ຈົບປະລິນຍາໂທດ້ານລະບົບກະສິກຳ ຈາກສະຖາບັນເທັກໂນໂລຊີແຫ່ງອາຊີ. ມີຄວາມຄາດຫວັງໄວ້ວ່າ: ລາວຈະມາຊ່ວຍຊີ້ນຳດ້ານວິຊາການໃຫ້ແກ່ພະນັກງານ ກະສິກຳແລະປ່າໄມ້ເມືອງ ແລະ ຊາວບ້ານ. ເປັນຄົນທີ່ຄຸ້ນເຄີຍກັບຫຼວງພະບາງດີ ເພາະມີເຊື້ອສາຍເປັນຊາວຫຼວງພະບາງ.

## ເລື່ອງ "ເຄື່ອງປ່າຂອງດົງ" ທີ່ມາເລົ່າສູ່ກັນຟັງຂອງທ່ານ ໂມລິອາກິ ວະຕະນະເບະ

NTFP ແມ່ນຫຍໍ້ມາຈາກຄຳວ່າ Non Timber Forest Products ທີ່ມີຄວາມໝາຍວ່າ: ສິ່ງທີ່ຜະລິດໄດ້ມາຈາກປ່າ ແຕ່ວ່າບໍ່ແມ່ນໄມ້ທັງໝົດເອີ້ນວ່າ: ເຄື່ອງປ່າຂອງດົງ, ຢູ່ຍີ່ປຸ່ນ ເພິ່ນບໍ່ໄດ້ນັບເອົາຈຳພວກສັດ ຈັດເຂົ້າຢູ່ໃນເຄື່ອງປ່າຂອງດົງ ແຕ່ວ່າຢູ່ລາວ ແມ່ນເພິ່ນຈັດເຂົ້າຢູ່ໃນເຄື່ອງປ່າຂອງດົງ.

### ໝາກຕາວ (ພາສາອັງກິດ : Sugar Palm ; ພາສາລາວ : Mak Tao)



ຄັ້ງທີ 4 ນີ້ແມ່ນຈະໄດ້ນຳສະເໜີ ໝາກຕາວ ທີ່ພົບເຫັນຫຼາຍ ຢູ່ບ້ານນາມອນ ໜຶ່ງໃນບັນດາບ້ານຈຸດເລີ່ມຕົ້ນ. ຂອງໂຄງການ.

ຊາວບ້ານຂາຍໝາກຕາວໃຫ້ແມ່ຄ້າໃນລາຄາກິໂລລະ 3000 ກີບ (30 ເຢັນ), ສ່ວນໜຶ່ງແມ່ນຈະຖືກສົ່ງອອກໄປຂາຍຢູ່ປະເທດໄທ. ຕົ້ນຕານແມ່ນຕົ້ນໄມ້ທີ່ຄ້າຍຄືກັບຕົ້ນໝາກພ້າວ. ຕົ້ນຕາວໃຊ້ເວລາ 17 - 20 ປີ ກວ່າຈະອອກດອກ, ທຸກໆ 3 - 4 ປີ ຫຼັງຈາກມີດອກແລ້ວກໍ່ຈະມີໝາກ, ຫຼັງຈາກເປັນໝາກແລ້ວ ສ່ວນດອກກໍ່ຈະຫ່ຽວແຫ້ງໄປ. ແຕ່ລະປີຈຳນວນຂອງໝາກຕາວທີ່ຈະເກັບເອົາໄປຂາຍນັ້ນແມ່ນຫຼຸດໜ້ອຍຖອຍລົງຫຼາຍ. ໝາກຕາວ ແມ່ນໃຊ້ເຮັດນ້ຳຫວານ, ຮູບນີ້ແມ່ນຖ່າຍຢູ່ຕະຫຼາດ ໃນເມືອງຫຼວງພະບາງ. ໝາກຕາວ ມີຄວາມຍາວປະມານ 1.5 ຊັງຕີ ເປັນຮູບວົງມົນຍາວ, ມື່ນໆໃສໆ. ຖ້າເອົາໝາກຕາວໃສ່ກັບນ້ຳກະທິໝາກພ້າວກັບນ້ຳກ້ອນ ຫຼືໃສ່ສິ່ງທີ່ຕົນເອງມັກເຊັ່ນ: ສາລີ, ເຜືອກ, ມັນຕ່າງໆກໍ່ຈະກາຍເປັນນ້ຳຫວານອັນທີ່ແຊບໃດ້. ນອກຈາກຍອດຂອງຕົ້ນຕານທີ່ສາມາດເອົາໄປເຮັດເປັນນ້ຳຕານ ໄດ້ແລ້ວຍັງໄດ້ຍິນມາວ່າ: ສາມາດເອົາໄປເຮັດເຫຼົ້າ ແລະ ນ້ຳສົ້ມໄດ້ອີກ ແຕ່ຢູ່ລາວເພິ່ນບໍ່ໄດ້ເຮັດແບບນີ້.

## ເລື່ອງຕ່າງໆຂອງລາວ

*~ເປັນມູມໜຶ່ງທີ່ນຳສະເໜີເລື່ອງຕ່າງໆກ່ຽວກັບລາວ ໃນຄັ້ງນີ້ແມ່ນບົດລາຍງານຈາກ ທ່ານ ນາກະຕະ ຊ່ຽວຊານທີມງານພັດທະນາຊຸມຊົນ*

### -ເລື່ອງຊ້າງຢູ່ບ້ານນາມອນ-

ລະຫວ່າງທາງໄປບ້ານ ນາມອນ ມັກຈະພົບເຫັນຊ້າງທີ່ຍ່າງໄປຍ່າງມາ ເຊິ່ງແມ່ນຊ້າງຂອງຊາວບ້ານ 8 ຄົນ. ເມື່ອ 7-8 ປີທີ່ແລ້ວນີ້ເຂົາເຈົ້າໄດ້ຊື້ໂຕຜູ້ 1ໂຕກັບໂຕແມ່1 ໂຕເພື່ອເອົາໄວ້ຂົນໄມ້ທ່ອນ. ເງິນທີ່ເຂົາເຈົ້າໃຊ້ຊື້ຊ້າງ ແມ່ນໄດ້ມາຈາກການຂາຍໄມ້ເກດສະໜາ ທີ່ເຄີຍໄດ້ແນະນຳມາແລ້ວໃນຈົດໝາຍຂ່າວສະບັບທີ 1. ລາຄາຊ້າງ ໂຕຜູ້ 1 ໂຕ ລາຄາປະມານ 1 ລ້ານ 3 ແສນ-1 ລ້ານ 4 ແສນເຢັນ(140ລ້ານກີບ) ສ່ວນໂຕແມ່ລາຄາໂຕໜຶ່ງປະມານ 9 ແສນ-1ລ້ານ 1ແສນເຢັນ(110ລ້ານກີບ) ລາຄານີ້ເທົ່າກັບຊື້ລົດໄດ້ຄັນໜຶ່ງ. ຊື້ງສຳລັບຊາວບ້ານແມ່ນຈຳນວນເງິນອັນມະຫາສານ. ແຕ່ວ່າເສັ້ນທາງລຳລຽງຈາກປ່າ ບໍ່ທັນມີເທື່ອ ເພາະສະນັ້ນ ວິທີນີ້ແມ່ນດີທີ່ສຸດແລ້ວ. ເພື່ອຈະລາກໄມ້ທ່ອນອອກມາ. ນາຍບ້ານເລົ່າໃຫ້ຟັງວ່າ: ຄວາມຮຽກຮ້ອງຕ້ອງການໃນການນຳໃຊ້ຊ້າງແມ່ນສູງຫຼາຍ, ຈຶ່ງມັກເຮັດໃຫ້ມີການຜິດຖຽງກັນເລື້ອຍໆກ່ຽວກັບຄ່າເຊົ່າຊ້າງ ຍ້ອນວ່າຢູ່ ສປປ ລາວເກືອບເວົ້າໄດ້ວ່າ: ບໍ່ມີຊ້າງປ່າຫຼືຊ້າງບ້ານໃດທີ່ອອກລູກໄດ້ ກໍ່ເລີຍໄດ້ຊື້ຊ້າງຈາກປະເທດໄທເຂົ້າມາ. ເຂົາເຈົ້າຈັບມັນມາແຕ່ຕອນຍັງນ້ອຍເພື່ອມາຝຶກ,ຄວານຊ້າງໄດ້ຝຶກລູກຊ້າງແຕ່ຕອນອາຍຸຂອງມັນໄດ້ 14 ປີ.ພໍອາຍຸຂອງມັນຮອດ 25 ປີ ກໍ່ມີກຳລັງແຮງພຽງພໍຕໍ່ການນຳໃຊ້ມັນ. ອາຍຸສູງສຸດຂອງຊ້າງກໍ່ຄ້າຍຄືກັນກັບຄົນເຮົາຄື:ປະມານ 70 - 80 ປີ. ຍ້ອນອາຍຸການໃຊ້ງານຂອງມັນດົນ.



ຊ້າງກັບຄວານຊ້າງຍ່າງມາຕາມທາງ

ຖ້າເບິ່ງການໄກແລ້ວ ບາງເທື່ອລາຄານີ້ອາດຈະບໍ່ແພງຈົນເກີນໄປກໍ່ໄດ້. ເພື່ອລ້ຽງຊ້າງທີ່ໜັກ 4 ຫາ 5 ໂຕນແລ້ວທຸກໆມື້ຈຳເປັນທີ່ຈະຕ້ອງໃຫ້ອາຫານມັນ ເຊິ່ງມີນ້ຳໜັກປະມານ 200 ກິໂລ. ໃນກໍລະນີ ບ້ານ ນາມອນ ທີ່ມີປ່າອັນອຸດົມສົມບູນຈຶ່ງເຮັດໃຫ້ຊ້າງຫາອານຫານກິນໄດ້ຕາມໃຈມັກ. ມື້ກ່ອນນີ້ໃນຂະນະທີ່ກຳລັງປະຕິບັດໜ້າທີ່ຢູ່ໃນປ່າ ໄດ້ພົບເຫັນຊ້າງຍ້ອນວ່າ: ບໍ່ຄ່ອຍທີ່ຈະພົບເຫັນ ກໍ່ເລີຍຖ່າຍຮູບເປັນທີ່ລະລຶກ.



ຊ້າງທີ່ກຳລັງເຮັດວຽກ
ແລະນັກຊ່ຽວຊານ ນາກະຕະ ທີ່ກຳລັງພັກຜ່ອນ

## <ກິດຈະກຳຕົ້ນຕໍ

### ບຸກຄົນສຳຄັນທີ່ມາຢ້ຽມຢາມ (ແຕ່ວັນທີ່ 01 ຫາ ວັນທີ່ 31 ເດືອນ ພຶດສະພາ)

- ວັນທີ່ 23 ເດືອນ 05: ຜູ້ຊ່ວຍສາດສະດາຈານ ທ່ານທະເກະດະຈາກພະແນກຄົ້ນຄວ້າເຂດອາຊີ-ອາຟຣິກາ ມະຫາວິທະຍາໄລກຽວໄດ (ກຽວໂຕະ)
- ວັນທີ່ 23 ເດືອນ 05: ຫົວໜ້າຊ່ຽວຊານໂຄງການສົ່ງເສີມການລ້ຽງປາໄລຍະ 2 (AQIP 2)ທ່ານ ອິເກະໂນະ ອຸເອະ ພ້ອມຄະນະອີກ 3 ຄົນ
- ວັນທີ່ 29 ເດືອນ05: ທ່ານ ດຣ. ຊຽນ ສະພັງທອງ, ລັດຖະມົນຕີວ່າການກະຊວງກະສິກຳແລະປ່າໄມ້ ພ້ອມດ້ວຍຄະນະ 5 ທ່ານໄດ້ລົງມາຢ້ຽມຢາມໂຄງການ.

### ກິດຈະກຳຕົ້ນຕໍ(ຕັ້ງແຕ່ວັນທີ່ 01 ຫາວັນທີ່ 31 ເດືອນ ພຶດສະພາ)

- ເດືອນ 05: ລົງຈັດຝຶກອົບຮົມດ້ານວິຊາການຢູ່ 4 ບ້ານຈຸດເລີ່ມຕົ້ນ(ລ້ຽງໝູ, ລ້ຽງແບ້, ປູກຕົ້ນໄມ້ໃຫ້ໝາກ).
- ເດືອນ 05: ຈັດຊື້ແລະສິ່ງວັດຖຸອຸປະກອນຕ່າງໆໃຫ້ບ້ານຈຸດເລີ່ມຕົ້ນ.
- ວັນທີ່ 05 ເດືອນ 05:ຈັດກອງປະຊຸມຄະນະຊີ້ນຳໂຄງການຂັ້ນສູນກາງ,ຫົວໜ້າສູນສົ່ງເສີມฯແຂວງແລະຫ້ອງການ ກປ ເມືອງ.
- ວັນທີ່ 26-27 ເດືອນ 05 :ລົງຈັດກອງປະຊຸມກ່ຽວກັບການເຮັດສວນກະສິກຳ-ປ່າໄມ້ປະສົມປະສານກັບຊາວບ້ານ(ບ້ານປົ່ງດົງ)
- ວັນທີ່ 30-31 ເດືອນ 05:ລົງຈັດກອງປະຊຸມກ່ຽວກັບການເຮັດສວນກະສິກຳ-ປ່າໄມ້ປະສົມປະສານກັບຊາວບ້ານ(ບ້ານ ສາມຕົ້ນ).

* ວັນທີ່ 30 ເດືອນ 05: ສົມທົບກັບບໍລິສັດທີ່ປຶກສາສຳຫຼວດລາຍຮັບ-ລາຍຈ່າຍຂອງຄອບຄົວຊາວບ້ານຜູ້ເຂົ້າຮ່ວມໂຄງການເປັນ

- ວັນທີ່ 30 ເດືອນ 05: ເຮັດວຽກຮ່ວມກັບໂຄງການປ້ອງກັນພະຍາດສັດເພື່ອສຳຫລວດພະຍາດສັດຢູ່ທີ່ບ້ານຈຸດເລີ້ມຕົ້ນ.
- ວັນທີ່ 31 ເດືອນ 05: ເຂົ້າຮ່ວມການປູກຕົ້ນໄມ້ໃຫ້ໝາກ ຂອງໂຮງຮຽນປະຖົມ ບ້ານປົ່ງດົງ

### ຄຳເຫັນຈາກບັນນາທິການ

ໃນລະດູນີ້ ແມ່ນມີແຕ່ໝາກໄມ້ທີ່ແຊບ, ຂ້ອຍມັກກິນໝາກມ່ວງ ແຕ່ໝົດຍາມໄປແລ້ວ, ດຽວນີ້ຢູ່ຕະຫຼາດມີແຕ່ຂາຍໝາກລິ້ນຈີ່, ໝາກລຳໄຍ, ໝາກຊຽບເຕັມໄປໝົດ. ມື້ວານນີ້ໄດ້ຮັບໝາກມ່ວງຍັກຈາກຈີນ (ຂະໜາດເທົ່າ 2 ເທົ່າຂອງໝາກມ່ວງຂອງປະເທດລາວ) ແຕ່ກິນລອງເບິ່ງ, ລົດຊາດກໍ່ຈັ່ງຊັ້ນ ຈັ່ງຊັ້ນແຫຼະ ! ທຽບກັບໝາກມ່ວງທີ່ປູກຢູ່ສວນບ້ານເຮົາບໍ່ໄດ້.

(ເອ)